ADB

# ການຈັດຕັ້ງປະຕິບັດຄືນ 'Early Harvest' ຂອງສັນຍາອະນຸພາກພື້ນແມ່ນ້ຳຂອງ ວ່າດ້ວຍ ການອຳນວຍຄວາມສະດວກໃນການຂົນສົ່ງຂ້າມແດນ (CBTA) ປີ 2024

## ບົດຝຶກອົບຮົມ ທີ 1 (A) – ຂໍ້ມູນທົ່ວໄປ

ພັດທະນາພາຍໃຕ້ໂຄງການ TA 6579-REG: 'ການເກັບກ່ຽວກ່ອນກຳນົດ'
ການປະຕິບັດສັນຍາການອຳນວຍຄວາມສະດວກດ້ານການຂົນສົ່ງຂ້າມແດນໃນອະນຸພາກພື້ນແມ່ນ້ຳຂອງ.
ຮ່ວມມືດ້ານການເງິນໂດຍລັດຖະບານຂອງສະຫະລາຊະອານາຈັກ

- ສັນຍາວ່າດ້ວຍການອຳນວຍຄວາມສະດວກໃນການຂົນສົ່ງຂ້າມແດນອະນຸພາກພື້ນແມ່ນ້ຳຂອງ (CBTA) ມີເປົ້າໝາຍແມ່ນເພື່ອສ້າງລະບົບຂົນສົ່ງຂ້າມແດນອະນຸພາກພື້ນແມ່ນ້ຳຂອງທີ່ເປັນອັນໜຶ່ງອັນດຽວ, ເພື່ອເຮັດໃຫ້ການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານ GMS ໄວຂຶ້ນ, ສະດວກຂຶ້ນ ແລະ ລາຄາຖືກລົງ (ຕາມການຕົກລົງຮ່ວມກັນ);
- ການໃຫ້ສັດຕະຍາບັນຕໍ່ສັນຍາແມ່ນໄດ້ສຳເລັດແລ້ວ ໂດຍ ປະເທດພາຄີຄູ່ສັນຍາ GMS ທັງໝົດ ແຕ່ປີ 2015. ແຕ່, ພາຫະນະ ກໍ່ບໍ່ສາມາດນຳໃຊ້ສັນຍາໄດ້ເທື່ອ – ຍົກເວັ້ນ ສຳລັບທີ່ຢູ່ພາຍໃຕ້ ສັນຍາ IICBTA ຈຳນວນໜຶ່ງ (ສັນຍາສອງຝ່າຍ ກ່ຽວກັບການລິເລີ່ມຈັດຕັ້ງປະຕິບັດ ສັນຍາ CBTA);
- ລັດຖະມົນຕີ ໄດ້ພົບປະຢູ່ກອງປະຊຸມ ຄະນະກຳມະທິການຮ່ວມ ແບບວົງແຄບ ຂອງສັນຍາ ໃນປີ 2016 ແລະ ໄດ້ແນະນຳເຈົ້າໜ້າທີ່ຄະນະກຳມະການອຳນວຍຄວາມສະດວກໃຫ້ແກ່ຂົນສົ່ງແຫ່ງຊາດເພື່ອ ຮ່າງການຈັດຕັ້ງປະຕິບັດ ‘Early Harvest’ CBTA ເປັນການແກ້ໄຂຊົ່ວຄາວ
- MOU “ການເກັບກ່ຽວກ່ອນກຳນົດ” ໂດຍບັນດາລັດຖະມົນຕີໄດ້ລົງນາມໃນວັນທີ 1 ມິຖຸນາ 2018. ໄດ້ມີການອອກໃບອະນຸຍາດ, ແລະ ເລີ່ມດຳເນີນງານ, ແຕ່ການປະຕິບັດໄດ້ຢຸດຕິພາຍຫຼັງປິດດ່ານຊາຍແດນໃນປີ 2020.
- ໃນເດືອນທັນວາປີ 2023, ບັນດາລັດຖະມົນຕີຄົມມະນາຄົມຂົນສົ່ງ GMS ໄດ້ຕົກລົງຈະເປີດນຳໃຊ້ 'ການເກັບກ່ຽວກ່ອນກຳນົດ' ແຕ່ວັນທີ 1 ເມສາ 2024 (ຮອດວັນທີ 31 ທັນວາ 2026).

- ການຈັດຕັ້ງປະຕິບັດ 'Early Harvest' ແມ່ນແນໃສ່ ການເຄື່ອນຍ້າຍໂດຍເສລີ ຂອງ ລົດຂົນສົ່ງສິນຄ້າ ແລະ ໂດຍສານ;
- ແຕ່ລະປະເທດ ອາດຈະອອກໃບອະນຸຍາດ ຂົນສົ່ງທາງຖະໜົນ GMS ສໍາລັບການເດີນທາງຫຼາຍຖ້ຽວ ແລະ ເອກະສານນໍາເຂົ້າລົດຊົ່ວຄາວ (TAD) ຈໍານວນ 500 ໃບອະນຸຍາດ ໃຫ້ແກ່ ຜູ້ດໍາເນີນການຂົນສົ່ງຂອງຕົນ (ເບິ່ງຮູບແບບຕົວຢ່າງໜ້າຕໍ່ໄປ);
- ປຶ້ມ TAD ຫຼືຮຽກຢ່າງໜຶ່ງວ່າເປັນ 'ໜັງສືຜ່ານແດນ' ລົດ ຊຶ່ງຕ້ອງເຊັນ ຫຼື ຈໍ້າກາ ແລະ ລົງວັນທີ ຢູ່ດ່ານຊາຍແດນ ໂດຍ ເຈົ້າໜ້າທີ່ພາສີຂອງປະເທດເຈົ້າພາບ ເມື່ອເຂົ້າ ແລະ ອອກປະເທດ;
- ຈະບໍ່ມີການຈໍາກັດຈໍານວນຄັ້ງຂອງການເດີນທາງຂອງພາຫະນະ ແຕ່ວ່າ ແຕ່ລະຄັ້ງ ຂອງການພັກເຊົາ ຢູ່ປະເທດເຈົ້າພາບ ສາມາດຢູ່ໄດ້ເຖິງ 30 ວັນ,
- ພາຫະນະ ອາດເຂົ້າຜ່ານ ດ່ານຊາຍແດນໃດໜຶ່ງ ແລະ ອອກຜ່ານອີກດ່ານໜຶ່ງ ແຕ່ວ່າ ອາດນໍາໃຊ້ຕາຫນ່າງເສັ້ນທາງ ທີ່ລະບຸຢູ່ໃນ ອະນຸສັນຍາ 1 ຂອງສັນຍາ CBTA;
- ໃນການລິເລີ່ມຈັດຕັ້ງປະຕິບັດຄືນໃນປີ 2024, ສປປ ລາວ ຈະເປີດເສັ້ນທາງ NR3 & NR9 ຈາກຫ້ວຍຊາຍ ຫາ ບໍ່ເຕ່ນ ແລະ ສະຫວັນນະເຂດ ຫາ ແດນສະຫວັນ ລວມທັງ NR13  ຈາກ ດ່ານບໍ່ເຕ່ນ ຫາ ດ່ານໜອງນົກຂຽນ;
- ກໍາລັງມີການປຶກສາຫາລື ເສັ້ນທາງແລະ ດ່ານເພີ່ມເຕີມ (ມີບາງສ່ວນໄດ້ຕົກລົງກັນແລ້ວ, ຂຶ້ນກັບການຍົກລະດັບພື້ນຖານໂຄງລ່າງ)
- ປະເທດມຽນມາ ຈະຮ່ວມການຈັດຕັ້ງປະຕິບັດ 'Early Harvest' ໃນປີ 2027.

National Transit Transport Coordinating Body, Cambodia

## GMS Road Transport Permit[1]

This document is issued in accordance with Protocol 3 and Article 23 of the Agreement between and among the Governments of the Kingdom of Cambodia, the People's Republic of China, the Lao People's Democratic Republic, the Union of Myanmar, the Kingdom of Thailand, and the Socialist Republic of Viet Nam for the Facilitation of Cross-Border Transport of Goods and People.

**Permit No.**

| Country code | Permit Number | Barcode |
|---|---|---|
| | | |

**Type of Permit/Transport Operation:**[2] ☐ Scheduled passenger ☐ Non-scheduled passenger ☐ Cargo

1. **Issuing Authority:**
   - 1.1 Name: ______
   - 1.2 Address: ______
   - 1.3 Contact Data:[3] ______
2. **Beneficiary of the Permit:**[4]
   - 2.1 Name: ______
   - 2.2 Address: ______
   - 2.3 Contact Data: ______
   - 2.4 Road Transport Operator's National License:[5] ______
3. **Particulars for Scheduled Passenger Transport Operations Only:**
   - 3.1 Itinerary: ______
   - 3.2 Frequency of operations for the beneficiary: ______
   - 3.3 Maximum Capacity (number of seats/persons): ______
   - 3.4 Other Restrictions:[6] ______
4. **Period of Validity:**[7] from ______ until ______
5. **Allocated Vehicle Registration Number:**[8]

| | Prime mover/Truck/Bus | Semi-trailer | | Prime mover/Truck/Bus | Semi-trailer |
|---|---|---|---|---|---|
| 1 | | | 5 | | |
| 2 | | | 6 | | |
| 3 | | | 7 | | |
| 4 | | | 8 | | |

Place and date of Issuance: ______ Authentication (Seal/Stamp, Signature): ______

[1] Warning: Counterfeiting is a criminal offence. This permit entitles its holder to perform cross-border road transport operations in the GMS region, subject to compliance with national laws of the Host Country, and the other conditions of the Agreement. The transport operator shall keep the original of this permit on board the vehicle at all times during cross-border transport operations for inspection and control purposes by authorities. This permit shall be valid only for the vehicle of which the registration number is entered on the permit form. Except for scheduled passenger transport operations, the itineraries are restricted to the exit/entry point, routes, and corridors defined in Protocol 1 to the Agreement.

[2] Please tick the type of transport operation.

[3] Contact data may include telephone number, fax number, email address, etc.

[4] This permit is nominative and non-negotiable and non-transferable.

[5] The validity of this permit shall be subject to the validity of the holder's transport operator license.

[6] Other restrictions on this type of transport operations flowing from the arrangements on terms and conditions by the Country whose territory is traversed as per Article 5(b) of Protocol 3 to the Agreement.

[7] Provided the permit was used before the expiry of its validity date by entering the territory of another GMS country than that of its holder transport operator, it shall remain valid until the completion of the transport operation by the return of the vehicle to its Home Country. A cross-border transport operation shall be completed by the exit of the vehicle from the Host Country territory within a period of 30 days from the date of entry in the Host Country territory. If the transport operator is unable to timely leave the Host Country territory, he/she shall inform the Host Country Competent Authority and may be required to file a request for extension.

[8] Type of vehicle should be entered. Only the number(s) entered in the last box prevail(s). If the form has become full within its validity period, the issuing authority shall upon a simple request from its holder forthwith replace the original form.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**Lao People's Democratic Republic**

ສັນຍາວ່າດ້ວຍການອຳນວຍຄວາມສະດວກ
ໃນການຂົນສົ່ງຂ້າມແດນພາຍໃຕ້ຂອບອະນຸພາກພື້ນແມ່ນ້ຳຂອງ

Greater Mekong Subregion
Cross-Border Transport Facilitation
Agreement

SPECIMEN

ປື້ມອະນຸຍາດນຳເຂົ້າພາຫະນະຊົ່ວຄາວ

**Motor Vehicle**
**Temporary Admission Document**

# ອະນຸສັນຍາ 1 CBTA ແຜນທີ່ສະແດງຕາໜ່າງເສັ້ນທາງ ແລະ ດ່ານຊາຍແດນ

- ດ່ານຊາຍແດນ ໄດ້ສະແດງໃນຮູບພາບ ບໍ່ແມ່ນດ່ານທີ່ໃຫ້ນໍາໃຊ້ໄດ້ທັງໝົດ
- ເສັ້ນທາງສີຂຽວ ແລະ ດ່ານຊາຍແດນ ຈະຖືກບັນຈຸເຂົ້າ ຈາກມື້ລິເລີ່ມຈັດຕັ້ງປະຕິບັດໃນວັນທີ 1 ເມສາ 2024
- ເສັ້ນທາງສີແດງ ອາດຈະຖືກເພີ່ມເຕີມໃນຕໍ່ໜ້າ (ຂຶ້ນຢູ່ກັບການຍົກລະດັບ ຖະໜົນ ແລະ ສິ່ງອໍານວຍຄວາມສະດວກ)



- ສິນຄ້າ ທີ່ຂົນສົ່ງມາ ຈະສືບຕໍ່ຜ່ານການປະຕິບັດຂັ້ນຕອນພາສີພາຍໃນ (ຕົວຢ່າງ ເອກະສານຊ້ອນທ້າຍ 6 ຂອງສັນຍາ CBTA ສໍາລັບລະບົບການຂົນສົ່ງຜ່ານແດນ ແລະ ການຂົນສົ່ງພາຍໃນ ຂອງອະນຸພາກພື້ນ ຈະບໍ່ນໍາໃຊ້ ສໍາລັບ ‘Early Harvest’);
- ແຕ່ວ່າ ບໍ່ຈໍາເປັນຕ້ອງມີການຄໍ້າປະກັນທາງດ້ານການເງິນ (ການຄໍ້າປະກັນພາສີ) ສໍາລັບການເຄື່ອນໄຫວ ຂອງຍານພາຫະນະ ແລະ ຕູ້ຄອນເທັນເນີ ຕາມທີ່ໄດ້ລະບຸ ຢູ່ໃນ MOU ‘Early Harvest’ ແລະປະຕິບັດຕາມສັນຍາ CBTA ມາດຕາ 18;
- ແຕ່ລະປະເທດ ຈະຮັກສາ (ແລະ ສົ່ງໃຫ້ກັນ) ບັນຊີ ຫຼື ໃບອະນຸຍາດຂົນສົ່ງທາງຖະໜົນ GMS ແລະ ປຶ້ມ TAD ທີ່ໄດ້ອອກອະນຸຍາດ;
- ເຈົ້າໜ້າທີ່ພາສີປະເທດເຈົ້າພາບ (ຕົວຢ່າງ ປະເທດທີ່ໄດ້ຖືກຢ້ຽມຢາມ) ທີ່ລະບຸໃນ ອະນຸສັນຍາ 1 CBTA ຈະຄວບຄຸມ ໃບອະນຸຍາດ ແລະ ປຶ້ມ TAD ໂດຍການປະທັບຕາ ແລະ ວັນທີ ຂອງລົດຕ່າງປະເທດທີ່ເຂົ້າ-ອອກດ່ານ.

- ເນື້ອໃນໜັງສືໂຄສະນາຸາມີເປັນພາສາຂອງແຕ່ລະປະເທດສະມາຊິກ GMS ແລະ ຂໍ້ມູນ ກ່ຽວກັບ ຂໍ້ກຳນົດທາງດ້ານນ້ຳ , ໜັກ ແລະ ຂະໜາດທີ່ອະນຍາດຂອງພາຫະນະ ແມ່ນເຂົ້າເບິ່ງໃນເວັບໄຊ [www.greatermekong.org/ttf](http://www.greatermekong.org/ttf)
- ADB ຈະຊ່ວຍໃນການຕິດຕາມການຈັດຕັ້ງປະຕິບັດ 'Early Harvest' ແລະ ຊ່ວຍ ລາຍງານຕໍ່ ຄະນະກຳມະການອຳນວຍຄວາມສະດວກແຫ່ງຊາດ ແລະ ຄະນະກຳມະທິການຮ່ວມ " ຂອງ CBTA (ລັດຖະມົນຕີຂົນສົ່ງ)
- ກອງປະຊຸມຄະນະກຳມະທິການຮ່ວມຈັດຄືນ ແລະ ຈັດທຸກໆ ທ້າຍປີ.
- ການເປັນປະທານຂອງຄະນະກຳມາທິການຮ່ວມ ແລະ ກອງປະຊຸມທີ່ກ່ຽວຂ້ອງ ແມ່ນເປັນການໝູນວຽນ ແລະ ຈັດຂຶ້ນໂດຍ ສປປ ລາວ ໃນປີ 2024

- ແຜນງານການຈັດເກັບຄ່າທຳນຸງມບູລະນະຮັກສານຳໃຊ້ເສັ້ນທາງ (Road Usage Maintenance Charge "RUMC") ອາດຈະທົດລອງຈັດຕັ້ງປະຕິບັດ ຢູ່ ສປປ ລາວ ອີງໃສ່ ອະນຸສັນຍາ 2 ຂອງສັນຍາ CBTA
- ປະເທດມຽນມາ ສຳເລັດການເຈລະຈາ ສຳລັບ ສັນຍາສອງຝ່າຍຮ່ວມກັບໄທ – ແລະ ກຳລັງເຈລະຈາແບບດຽວກັນກັບປະເທດເພື່ອນບ້ານອື່ນ – ໃນການກະກຽມ ການເຂົ້າຮ່ວມໃນ 'Early Harvest' ໃນປີ 2027
- ຂໍ້ມູນແນະນຳອື່ນໆ ແມ່ນມີສະເໜອຢູ່ໃນ ເອກະສານ 1 (B) ກ່ຽວກັບບັນຫາທີ່ຕ້ອງປະຕິບັດ – ກ່ຽວກັບ ອີງການທີ່ມີສິດອຳນາດ ທີ່ກ່ຽວຂ້ອງ ແລະ ຜູ້ດຳເນີນການຂົນສົ່ງຕົວຈິງ

- ລາຍລະອຽດເພີ່ມເຕີມ ກ່ຽວກັບ ສັນຍາ CBTA ‘Early Harvest’, ລວມທັງເນື້ອໃນ ທີ່ໄດ້ລົງນາມ ໃນ MOU ‘Early Harvest’, ສໍາເນົາຕົວຢ່າງຂອງ ໃບອະນຸຍາດ ແລະ ປຶ້ມ TAD ແລະ ເອກະສານໂຄສະນາ  Early Harvest ມີຢູ່ໃນເວັບໄຊ *www.greatermekong.org/ttf*
- ຖະແຫຼງການຢ່າງເປັນທາງການຈາກຄະນະກໍາມາທິການຮ່ວມ CBTA ແມ່ນໄດ້ລົງໃນ https://www.greatermekong.org/g/joint-committee-cbta

## ຂອບໃຈ!

ພັດທະນາພາຍໃຕ້ໂຄງການ TA 6579-REG: 'ການເກັບກ່ຽວກ່ອນກໍານົດ'
ການປະຕິບັດສັນຍາການອໍານວຍຄວາມສະດວກດ້ານການຂົນສົ່ງຂ້າມແດນໃນອະນຸພາກພື້ນແມ່ນໍ້າຂອງ.
ຮ່ວມມືດ້ານການເງິນໂດຍລັດຖະບານຂອງສະຫະລາຊະອານາຈັກ